# ພຣະມະຫາກະສັດ
# ອົງສຳຄັນຂອງລາວ



# ຄຳນຳ

ຂອງສະເດັດເຈົ້າສຸວັນນະພູມາ ນາຍົກຣັຖມົນຕຣີ

ເພື່ອນຮ່ວມຊາດທີ່ຮັກແພງທັງຫລາຍ,

ຂ້າພະເຈົ້າມີຄວາມປື້ມປີຕິຍິນດີທີ່ສຸດ ທີ່ໄດ້ເຫັນປຶ້ມປະວັດສາດລະບາຍສີ "ພຣະມະຫາກະສັດອົງສຳຄັນຂອງລາວ" ນີ້ຕົກຢູ່ໃນມືຂອງພວກທ່ານ.

ໃນຂນະທີ່ປະເທດຊາດຂອງເຮົາກຳລັງປະສົບກັບໄພສົງຄາມ ຈາກການຮຸກຮານຂອງພາຍນອກນີ້ ພວກເຮົາຕ້ອງລະລຶກເຖິງຄວາມອົງອາດກ້າຫານເສັຽສລະຂອງບັນພະບຸຣຸດ ແລະວີຣະກະສັດຂອງດິນແດນລ້ານຊ້າງຂອງເຮົາ. ຍ້ອນຄວາມອົງອາດກ້າຫານເສັຽສລະຂອງພຣະອົງ ດິນລາວຕອນນີ້ຈຶ່ງຕົກມາຮອດພວກເຮົາຈົນເທົ່າທຸກວັນນີ້. ສະນັ້ນພວກເຮົາທຸກຄົນ ຈຶ່ງມີໜ້າທີ່ຮັກສາຫວງແຫນ ແລະປ້ອງກັນເຂດນ້ຳແດນດິນອັງຄົບຖ້ວນຂອງພຣະຣາຊອານາຈັກລາວ ເພື່ອບໍ່ໃຫ້ສາບສູນໄປຈາກແຜນທີ່ຂອງໂລກ.

ຂ້າພະເຈົ້າ ໃນນາມເປັນຜູ້ນຳຂອງຣັຖບານພຣະບາດສົມເດັດພຣະເຈົ້າມະຫາຊີວິດ ແລະເປັນນັກຊາດນິຍົມຜູ້ນຶ່ງ ຂໍເຊີນຊວນເພື່ອນຮ່ວມຊາດທຸກຄົນໄດ້ອ່ານປື້ມສະບັບນີ້ຢ່າງຖີ່ຖ້ວນແລ້ວສົ່ງຕໍ່ໆກັນໄປໃຫ້ໄດ້ຮູ້ໄດ້ອ່ານນຳກັນ.

ຊາດຈະເປັນຊາດແລະລາວຈະເປັນລາວຕໍ່ໄປ ກໍແຕ່ເມື່ອລາວທຸກຄົນບາກບັ້ນຂັຍັນໝັ້ນພຽນ ແລະຍອມເສັຽສລະດັ່ງບັນພະບຸຣຸດຂອງເຮົານັ້ນ. ປະຊາຊົນຮຸ່ນຫລັງ ຈະຈາລຶກຄຸນງາມຄວາມດີຂອງພວກທ່ານໄວ້ຢ່າງບໍ່ຫລົງລືມ.

ນະຄອນວຽງຈັນ ທີ່ ໑ ມົກຣາ ໑໙໗໐

ເຈົ້າສຸວັນນະພູມາ

(ເຈົ້າກົມມະນາ)

# ພຣະເຈົ້າຟ້າງຸ່ມ ພຣະບິດາຂອງຊາດລາວ

## (ພ,ສ໌, ໑໘໕໙ ~ ໑໙໑໗)



ເຖິງວ່າໃນໂລກນີ້ຈະມີປະເທດຕ່າງໆຢູ່ຫລາຍປະເທດ ແຕ່ປະເທດທີ່ເກົ່າແກ່ເໝືອນພຣະຣາຊອານາຈັກລາວ ມີຢູ່ບໍ່ຫລາຍ ເຮົາຮູ້ກັນດີແລ້ວວ່າຜູ້ສ້າງຣາຊອານາຈັກແຫ່ງນີ້ແມ່ນພຣະເຈົ້າຟ້າງຸ່ມ.



ພຣະເຈົ້າຟ້າງຸ່ມ ປະສູດເມື່ອ ພ.ສ. ໑໘໕໙ ທີ່ເມືອງຊວາ ຊຶ່ງປັດຈຸບັນແມ່ນນະຄອນຫລວງພຣະບາງ ໃນສມັຍນັ້ນຍັງບໍ່ມີພຣະຣາຊອານາຈັກລາວ ຄົງມີແຕ່ເມືອງຕ່າງໆທີ່ເປັນອານາຈັກຂນາດນ້ອຍ ຄອຍຍາດແຍ່ງອຳນາດກັນ ໃນບັນດາເມືອງຕ່າງໆເຫລົ່ານີ້ມີເມືອງຊວາຢູ່ດ້ວຍເມືອງນຶ່ງ.

▲ ກະສັດເມືອງຊວາຜິດໃຈກັບຣາຊໂອຣົດຍ້ອນນາງສນົມ ຈຶ່ງສັ່ງຂັບໄລ່ຣາຊໂອຣົດແລະຣາຊນັດດາ ຄືເຈົ້າຟ້າງຸ່ມອອກໄປຈາກເມືອງ



◀ ເຈົ້າຟ້າງຸ່ມກັບພຣະບິດາລົງເຮືອໜີລ່ອງຕາມແມ່ນ້ຳຂອງ ແລະຫລາຍສັປດາຕໍ່ມາກໍໄປຮອດນະຄອນວັດ ປະເທດຂແມນ



◀ ເຈົ້າຟ້າງຸ່ມໄດ້ຮັບການລ້ຽງດູ ແລະຮຽນວິຊາຄວາມຮູ້ສິລປະວິທຍາການຕ່າງໆ ຈາກພຣະມະຫາປາສມັນ ພຣະອົງຮຽນເກັ່ງ ແລະສຶກສາວິຊາດ້ວຍຄວາມເອົາໃຈໃສ່ມື້ລະຫລາຍຊົ່ວໂມງ



▲ ເຈົ້າຟ້າງຸ່ມຈຶ່ງມີຄວາມສລາດຫລັກແຫລມແລະຄຸໝັ່ນ ຈົນພຣະເຈົ້າແຜ່ນດິນເມືອງຂເມນຈຶ່ງມອບນາງແກ້ວເກັງຍາໃຫ້ເປັນພຣະເຫວີຂອງເຈົ້າຟ້າງຸ່ມ



ເຈົ້າຟ້າງຸ່ມຈຶ່ງປາຖນາຈະກັບຄືນມາຍັງເມືອງຊວາ ເພື່ອເຕົ້າໂຮມອານາຈັກນ້ອຍໆ ທີ່ຍາດແຍ່ງອຳນາດກັນເຂົ້າເປັນປະເທດດຽວ ພຣະອົງພ້ອມກັບພຣະບິດາ ຈຶ່ງຂໍກຳລັງທັບ ຈຳນວນສິບພັນຄົນຈາກພຣະເຈົ້າແຜ່ນດິນຂເມນ ▶



▲ ພຣະອົງພ້ອມກັບພຣະບິດາ ນຳກອງທັບເຂົ້າມາສູ່ດິນແດນທີ່ເປັນພຣະຣາຊອານາຈັກລາວໃນປັດຈຸບັນ ເມື່ອປະຊາຊົນຮູ້ວ່າພຣະອົງຍົກທັບມາເພື່ອໂຮມລາວ ແລະຍຸຕິການຣົບຣາຂ້າຟັນກັນ ເຂົາເຈົ້າຈຶ່ງຖວາຍການຕ້ອນຮັບດ້ວຍຄວາມປິຕິຍິນດີ

ແຜນທີ່ສະແດງເສັ້ນທາງເດີນທັບຂອງເຈົ້າຟ້າງຸ່ມ ຈາກຂເມນເພື່ອເຂົ້າມາໂຮມລາວ ▶




ພຣະບິດາຂອງເຈົ້າຟ້າງຸ່ມ
ເສັຽຊີວິດໃນລະຫວ່າງກອງ
ທັບເດີນທາງ ແລະເຈົ້າຟ້າ
ງຸ່ມຕີເອົາເມືອງຊວາໄດ້
ພຣະເຈົ້າຟ້າງຸ່ມຂຶ້ນສເວີຍຣາຊສົມບັດ
ເປັນກະສັດລ້ານຊ້າງ ແລະສະຖາປະນາອານາ
ຈັກລາວຂຶ້ນເປັນເທື່ອທຳອິດເມື່ອ ພ.ສ. ໑໘໙໖
ເຈົ້າຜູ້ຄອງເມືອງຕ່າງໆທີ່ຢູ່ໃນອານາຈັກລາວຍອມຍົກໃຫ້
ພຣະເຈົ້າຟ້າງຸ່ມເປັນພຣະມະຫາກະສັດຂອງອານາຈັກລາວ
ເວັ້ນແຕ່ພຣະຍາເພົາ ເຈົ້າຜູ້ຄອງເມືອງໄຜ່ໜາມ ຊຶ່ງເປັນ
ນະຄອນວຽງຈັນໃນປັດຈຸບັນ



ພຣະເຈົ້າຟ້າງຸ່ມຊົງປາຖນາຈະ
ເຕົ້າໂຮມເມືອງຕ່າງໆໃຫ້ເຂົ້າ
ເປັນອານາຈັກລາວອັນດຽວ
ພຣະອົງຈຶ່ງຍົກກອງທັບລົງ
ມາຕີເມືອງໄຜ່ໜາມ ແຕ່ບໍ່
ສາມາດເຂົ້າຕີໄດ້ຍ້ອນວ່າມີ
ກໍໄຜ່ອ້ອມຮອບເມືອງຢ່າງ
ແໜ້ນໜາ



ພຣະອົງຊົງຫາອຸບາຍເຂົ້າເມືອງ ໂດຍຮັບສັ່ງໃຫ້ເອົາເງິນ
ແລະຄໍາມາຕີເປັນຈຽງໜ້າແລ້ວຍິງສຸ່ມໃສ່ຕາມກໍໄຜ່



ທະຫານຂອງເມືອງໄຜ່ໜາມເຫັນຈຽງໜ້າເງິນຄໍາມີຄ່າຍິ່ງກວ່າ
ກໍໄຜ່ທີ່ເປັນກໍາແພງປ້ອງກັນເມືອງຂອງຕົນ ເຂົາເຈົ້າຈຶ່ງພາກັນ
ຖາງກໍໄຜ່ຊອກເອົາຈຽງໜ້າ



ພຣະເຈົ້າຟ້າງຸ່ມຈຶ່ງຍົກພົນເຂົ້າຕີເອົາເມືອງໄດ້ໂດຍງ່າຍ ນັບເປັນ
ເທື່ອທໍາອິດໃນປວັດສາດ ທີ່ສາມາດໂຮມເມືອງທຸກເມືອງເຂົ້າ
ເປັນອານາຈັກອັນດຽວຄື ອານາຈັກລ້ານຊ້າງ ພຣະອົງຍົກທັບ
ໄປທາງໃຕ້ຕີເອົາເມືອງໂຄຣາດ ແລ້ວໂຮມເຂົ້າເປັນອານາເຂດ
ຂອງອານາຈັກລ້ານຊ້າງ


ຊາວເມືອງໄຜ່ໜາມ (ນະຄອນວຽງຈັນ
ໃນປັດຈຸບັນ) ຖວາຍການຕ້ອນຮັບ
ເຈົ້າຟ້າງຸ່ມ ດ້ວຍການສລອງຊັຍຢ່າງ
ໃຫຍ່ໂຕ ທີ່ບ່ອນຊຶ່ງປັດຈຸບັນເປັນ
ໂຮງຮຽນເທັກນິກວຽງຈັນ


ທະຫານຂອງພຣະເຈົ້າຟ້າງຸ່ມ
ຖວາຍພຣະພອນວ່າ "ພຣະອົງຊົງ
ນຳພວກຂ້າພຣະບາດໃຫ້ເປັນຜູ້
ກ້າຫານ ສາມາດເອົາຊັຍຊນະ
ເມືອງອື່ນໄດ້ດ້ວຍຄວາມພາກ
ພູມໃຈ ພວກຂ້າພຣະບາດຂໍອັນ
ເຊີນພຣະອົງຂຶ້ນຄອງຣາຊບັນ
ລັງລ້ານຊ້າງອີກເທື່ອນຶ່ງ"


ພຣະເຈົ້າຟ້າງຸ່ມຊົງເຕືອນປະຊາຊົນໃຫ້ຣະວັງພັຍການຮຸກຮານ
ຂອງສັດຕູ ແລະໃຫ້ທຸກຄົນຣາຍງານຕໍ່ທາງບ້ານເມືອງເມື່ອຮູ້
ຂ່າວການເຄື່ອນໄຫວຂອງຝ່າຍສັດຕູ ພຣະອົງຮັບສັ່ງວ່າ "ທັນ
ໃດທີ່ພວກເຈົ້າຮູ້ຂ່າວວ່າສັດຕູຕ່າງປະເທດຄິດຮ້າຍຕໍ່ຣາຊ
ອານາຈັກຂອງເຮົາ ເຈົ້າຈົ່ງນຳຂ່າວນັ້ນມາແຈ້ງໂລດ ຢ່າສູ່
ອຳຂ່າວຮ້າຍນີ້ໄວ້"


ພວກເຮົາຄວນນຶກເຖິງກະແສຮັບສັ່ງຂອງພຣະເຈົ້າ
ຟ້າງຸ່ມ ຍ້ອນວ່າປັດຈຸບັນນີ້ ວຽດນາມເໜືອພວມ
ຮຸກຮານແລະຂົ່ມຂູ່ພຣະຣາຊອານາຈັກລາວຂອງເຮົາ.

ເພື່ອໃຫ້ປະຊາຊົນເລີກນັບຖືຜີຟ້າ
ຜີແຖນ ພຣະເຈົ້າຟ້າງຸ່ມຈຶ່ງຊົງນິມົນ
ພຣະມະຫາປາສມັນ ພຣະອາຈານ
ເດີມຂອງພຣະອົງຈາກເມືອງຂແມນ
ມາສັ່ງສອນພຣະພຸທສາສນາໃນລາວ





ພຣະມະຫາປາສມັນ ພ້ອມດ້ວຍ
ພິກຂຸສົງແລະນັກປາດ ໄດ້ເອົາ
ພຣະບາງຊຶ່ງມີອາຍຸເກົ່າພັນປີ
ຄັມພີພຣະໄຕປິດົກແລະໜໍ່ຕົ້ນ
ມະຫາໂພມານໍາ

ຫລາຍສິບປີຕໍ່ມາ ເມືອງຊວາ ຊຶ່ງເປັນນະຄອນຫລວງ
ສມັຍພຣະເຈົ້າຟ້າງຸ່ມ ກໍໄດ້ປ່ຽນຊື່ເປັນນະຄອນ
ຫລວງພຣະບາງ ຕາມຊື່ພຣະພຸທຮູບສັກສິດອົງນີ້

ເຖິງວ່າພຣະເຈົ້າຟ້າງຸ່ມຈະສວັນນະ
ຄົດເມື່ອ ພ.ສ. ໑໙໑໗ ດົນນານ
ເກືອບຫົກຮ້ອຍປີມາແລ້ວ ແຕ່ພຣະ
ກຽດປວັດຂອງພຣະອົງຍັງຄົງຢູ່ໃນ
ຄວາມຊົງຈໍາຂອງປະຊາຊົນລາວທັງ
ຊາດ ຍ້ອນວ່າພຣະອົງຊົງເປັນຜູ້ສ້າງ
ພຣະຣາຊອານາຈັກລາວອັນເປັນທີ່
ຮັກຂອງເຮົານີ້




ພຣະເຈົ້າສາມແສນໄທ
ກະສັດຜູ້ຊົງສ້າງຊາດລາວ
(ພ.ສ. ໑໘໙໙ - ໑໙໕໘)
ພຣະເຈົ້າສາມແສນໄທ ເປັນໂອຣົດພຣະເຈົ້າ
ຟ້າງຸ່ມ ຂຶ້ນສເວີຍຣາຊສົມບັດເມື່ອພຣະຊົນ
ມາຍຸ ໑໘ ປີ ໃນພ.ສ. ໑໙໑໗
ສາມປີຕໍ່ມາພຣະອົງຮັບສັ່ງ
ໃຫ້ທຳບັນຊີພົນເສິກ ປາກົດ
ວ່າສເພາະທີ່ເປັນຄົນລາວລ້ວນ
ມີສາມແສນຄົນ ດ້ວຍເຫດນີ້
ເສນາມຸນຕີຈຶ່ງຖວາຍພຣະນາມ
"ພຣະຍາສາມແສນໄທ"
ພຣະເຈົ້າສາມແສນໄທຊົງເຫັນວ່າ
ອານາຈັກລ້ານຊ້າງທີ່ພຣະອົງສືບ
ຣາຊສົມບັດຈາກພຣະເຈົ້າຟ້າງຸ່ມ ມີ
ອານາເຂດກວ້າງຂວາງ ຖ້າບໍ່ຈັດກອງ
ທັບໃຫ້ເຂັ້ມແຂງຄົງຈະບໍ່ປອດພັຍ
ພຣະອົງຈຶ່ງຊົງຈັດຣະບຽບກອງທັບໃຫ້
ເຂັ້ມແຂງ ໂດຍອາສັຍປະຊາຊົນທັງຊາດ
ໂຮມປ້ອງກັນອານາຈັກ.


ກຳລັງທັບປ້ອງກັນອານາຈັກລ້ານຊ້າງຂອງພຣະເຈົ້າສາມແສນໄທ ແບ່ງ
ອອກເປັນກອງໆ ຄື ກອງຊ້າງ ກອງມ້າ ກອງຣົບ ກອງຮັກສາ
ຄວາມສງົບພາຍໃນ ແລະກອງທະຫານບ້ານ
ທະຫານຂອງພຣະເຈົ້າສາມແສນໄທ ເອົາໃຈ
ໃສ່ຊ່ວຍເຫລືອປະຊາຊົນເປັນຢ່າງດີ
ໄພ່ຟ້າປະຊາຊົນຈິ່ງຍ້ອງຍໍແລະ
ຮັກແພງ ຄວາມພີຣະອາດຫານ
ແລະຄວາມເກັ່ງກ້າໃນການຣົບ
ເປັນກິຕິສັບເລື່ອງລືໄປເຖິງປະເທດ
ຂ້າງຄຽງ ຈົນບໍ່ມີປະເທດໃດ
ຫານມາຮຸກຮານ
ພຣະເຈົ້າສາມແສນໄທຊົງເຫັນ
ຄວາມສຳຄັນຂອງການປົກຄອງ
ປະເທດ ພຣະອົງຈຶ່ງຊົງທຳນຸ
ບຳຣຸງການສຶກສາ ການຂົນ
ສົ່ງ ແລະການໂຍທາ.
ພຣະອົງຊົງອົບຣົມໄພ່ຟ້າຣາສດອນໃຫ້ຮູ້ຈັກການຊ່ວຍຊາດ
ດ້ວຍການຕັ້ງໃຈເຮັດວຽກ ແລະ ເສັຽພາສີເພື່ອຕອບແທນ
ຄວາມສະດວກສະບາຍ ແລະຄວາມສງົບສຸກທີ່ບ້ານເມືອງ
ໄດ້ໃຫ້ແກ່ພວກເຂົາ.






# ພຣະເຈົ້າສຸວັນນະບັນລັງ (ແທ່ນຄຳ)

## ຜູ້ຊົງຜາບແກວ (ພ,ສ, ໒໐໒໑ - ໒໐໘໘)







ພຣະເຈົ້າໄຊຍະຈັກກະພັດ ຈຶ່ງຮັບສັ່ງໃຫ້ຕັດຂົນແລະ
ເລັບຊ້າງເຜືອກໃສ່ເອບຄຳສົ່ງໄປໃຫ້ພຣະເຈົ້າແຜ່ນ
ດິນເມືອງແກວ
ແຕ່ມະຫາອຸປຮາດບໍ່ພໍໃຈໃນການມອບ
ຂົນແລະເລັບໃຫ້ເຈົ້າແຜ່ນດິນແກວ
ຈຶ່ງເອົາຂີ້ຊ້າງໃສ່ໃນເອບແທນ
ພຣະເຈົ້າແຜ່ນດິນແກວຊົງເປີດເອບ
ເຫັນເປັນຂີ້ຊ້າງ ກໍຊົງພິໂຣດ
ດ້ວຍເຫດນີ້ພຣະເຈົ້າແຜ່ນດິນແກວ
ຈຶ່ງຊົງນຳກຳລັງພົນ ໔໕໐,໐໐໐ ຄົນ
ຂ້າມແດນເຂົ້າມາຕີລາວ


ທັບແກວຍົກຜ່ານພູ ບຸກລົງມາທາງໃຕ້
ຈົນເຖິງນະຄອນຫລວງພຣະບາງ ການທີ່
ທັບແກວສາມາດຕີເອົາເມືອງຕ່າງໆຕາມ
ສາຍທາງ ກໍຍ້ອນວ່າແກວມີກຳລັງພົນ
ຫລາຍກວ່າ
ຖນົນຫົນທາງຕາມໃນເມືອງມີ
ແຕ່ສຽງຄົນຮ້ອງໄຫ້ຮ່ຳໄຮ້ແລະ
ພຣະສົງສູດມົນເພື່ອໃຫ້ບ້ານ
ເມືອງພົ້ນຈາກຄວາມພິນາດ
ຍ້ອນທັບແກວມີກຳລັງພົນເຫລືອ
ຫລາຍ ທັບຝ່າຍລາວຈຶ່ງເສັຽໄຊ
ແລະພຣະເຈົ້າໄຊຍະຈັກກະພັດ
ສະເດັດໜີອອກນະຄອນຫລວງ
ພຣະບາງ
ແຕ່ເປັນບຸນຂອງລາວ ເຈົ້າແຫ່ນຄຳ
ພຣະຣາຊໂອຣົດຂອງພຣະເຈົ້າໄຊຍະຈັກກະ
ພັດບໍ່ຍອມໃຫ້ລາວຕົກເປັນເມືອງຂຶ້ນ
ຂອງແກວ


ເຖິງວ່າຈະມີຜູ້ຄັດຄ້ານວ່າບໍ່
ມີທາງຈະຕີກອງທັບແກວໃຫ້ພ່າຍ
ແພ້ໄປໄດ້ ແຕ່ເຈົ້າແຫ່ນຄຳກໍເກນ
ເອົາທະຫານແລ້ວເປັນຜູ້ນຳ
ກອງທັບມຸ່ງໜ້າຄືນໄປນະ
ຄອນຫລວງພຣະບາງ
ຄວາມກ້າຫານເດັດດ່ຽວຂອງເຈົ້າ
ແຫ່ນຄຳ ເປັນເຫດໃຫ້ທະຫານຝ່າຍ
ລາວມີຂວັນດີຫລາຍຈົນສາມາດຕີກອງທັບແກວ
ທີ່ຍຶດນະຄອນຫລວງພຣະບາງແຕກພ່າຍໄປ
ນາຍທະຫານແກວ ໔,໐໐໐ ຄົນ
ເຫລືອກັບຄືນແຕ່ ໓໐໐ ຄົນເທົ່ານັ້ນ
ພວກເສນາອາມາດຈຶ່ງພ້ອມກັນຣາຊາພິເສກເຈົ້າ
ແຫ່ນຄຳ ຜູ້ກູ້ຊາດລາວແລະບ້ານເມືອງລາວ ຂຶ້ນ
ສເວີຍຣາຊສົມບັດ ຖວາຍພຣະນາມວ່າ ພຣະເຈົ້າ
ສຸວັນນະບັນລັງ
ປັດຈຸບັນ ວຽດນາມເໜືອຜູ້ຮຸກຮານ
ພວມຂົ່ມຂູ່ປະເທດຂອງເຮົາເຊົາເຈົ້າ
ຮູ້ດີວ່າປະຊາຊົນລາວບໍ່ໄດ້ຄິດຮ້າຍ
ຕໍ່ວຽດນາມເໜືອ ແລະປາຖນາ
ຈະຢູ່ຢ່າງສງົບສຸກ

ພວກວຽດນາມເໜືອຄວນຈະຮູ້ດີວ່າ ຖ້າເຂົາ
ເຈົ້າຍັງຮຸກຮານລາວຕໍ່ໄປ ເຂົາເຈົ້າກໍຈະ
ປະສົບຄວາມພ່າຍແພ້ ແລະຖືກຕີແຕກ
ໄປອີກ ເໝືອນດັ່ງເຈົ້າເຫ່ນຄຳເຄີຍຕີມາ
ແລ້ວເມື່ອປາງກ່ອນ ຂໍໃຫ້ວຽດນາມເໜືອ
ຈື່ຈຳບົດຮຽນນີ້ໄວ້





# ພຣະເຈົ້າໂພທິສາຣະຣາຊເຈົ້າ

## "ຄວາມສາມັກຄີແມ່ນຂຸມກຳລັງ"

(໑໕໐໑-໑໕໕໐)

ຫລັງຈາກທີ່ພຣະອົງໄດ້ສເວີຍຣາດໃນ
ປີ ໑໕໒໐ ເມື່ອພຣະອົງຊົງມີພຣະ
ຊົນມາຍຸໄດ້ ໑໙ ພັນສາ ພຣະອົງ
ເປັນກະສັດທີ່ເຊື່ອໝັ້ນໃນພຣະພຸທ-
ສາສນາໄດ້ອຸປສົມບົດຊົ່ວຣະຍະນຶ່ງ.





ພຣະເຈົ້າໂພທິສາຣະຣາຊ ເປັນກະສັດທີ່ເຂັ້ມແຂງເພາະວ່າ
ອານາຈັກຂອງພຣະອົງເປັນອັນນຶ່ງອັນດຽວກັນ ກະສັດ
ເກວໄດ້ເກງຂາມ ແລະນັບຖືພຣະອົງ
ຍ້ອນອານາຈັກຂອງພຣະອົງແຂງ
ແຮງກົມກຽວກັນ ສະນັ້ນກະສັດ
ເກວຈຶ່ງສົ່ງຣາຊບັນນາການ
ມາຖວາຍພຣະອົງ.


ເມື່ອຜູ້ນຳແຂວງຊຽງຂວາງໄດ້ທຳການ
ກະບົດໃນປີ ໑໕໓໓ ພຣະເຈົ້າໂພທິສາຣະ
ຣາດໄດ້ປາບພວກກະບົດໃຫ້ຣາບຄາບ
ຕາມຣະບຽບ ເພື່ອຮັກສາໄວ້ຊຶ່ງຄວາມ
ເປັນປຶກແຜ່ນແໜ້ນໜາຂອງ
ອານາຈັກ.
ໃນປີ ໑໕໔໐ ກະສັດອະຍຸທຍາໄດ້ໂຈມຕີວຽງຈັນ
ພຣະເຈົ້າໂພທິສາຣະຣາຊ ໄດ້ຕຣັດສັ່ງໃຫ້ກະສັດ
ແສນຫລວງລ້ານຊ້າງທ່າແຂກ ສົ່ງທະຫານໄປ
ຊ່ວຍ ກະສັດແສນຫລວງຜູ້ຈົງຮັກພັກດີໄດ້ສົ່ງ
ກອງທະຫານຂອງພຣະອົງໄປວຽງຈັນທັນທີ ເພື່ອ
ປ້ອງກັນປະເທດລາວເຖິງແມ່ນວ່າອານາຈັກຂອງ
ພຣະອົງບໍ່ໄດ້ຖືກບຸກລຸກກໍຕາມ ທະຫານທັງສອງ
ຝ່າຍໄດ້ຊ່ວຍກັນຕີພວກອະຍຸທຍາໃຫ້ແຕກໄປ
ຢ່າງບໍ່ເປັນຣະບຽບ.
ພວກເສນາອຳມາດແຫ່ງນະຄອນຊຽງໃໝ່ຮູ້ສຶກ
ເຖິງຄວາມເຂັ້ມແຂງ ແລະຄວາມເປັນກ້ອນເປັນ
ໜ່ວຍຂອງອານາຈັກລາວ ພວກເຂົາເຈົ້າຈຶ່ງໄດ້
ຂໍໃຫ້ພຣະເຈົ້າໂພທິສາຣະຣາຊເອົາເຈົ້າເຊດຖະ
ວົງໂສ ເມືອເປັນເຈົ້າແຜ່ນດິນໃນນະຄອນ
ຊຽງໃໝ່.
ພາຍຫລັງທີ່ໄດ້ຣາຊາພິເສກພຣະຣາຊໂອຣົດໃຫ້
ເປັນກະສັດຊຽງໃໝ່ແລ້ວ ພຣະເຈົ້າໂພທິສາຣະ
ຣາຊກໍນຳເອົາພຣະແກ້ວມໍຣະກົດເຂົ້າສູ່ວຽງຈັນ.



ໃນປີ ໑໕໕໐ ພຣະເຈົ້າໂພທິສາຣະຣາຊ ໄດ້ຈົງອັນເຊີນໃຫ້ທູດຕ່າງປະເທດ ໑໕ ປະເທດໃຫ້ມາເປັນສັກຂີພິຍານເບິ່ງວິທີຄ້ອງຊ້າງປ່າດ້ວຍບ້ວງບາດ ພຣະເຈົ້າໂພທິສາຣະຣາຊເປັນຜູ້ຊຳນິຊຳນານໃນການຂີ່ຊ້າງຕໍ່ເພື່ອຄ້ອງຊ້າງປ່າ ແຕ່ວ່າຊ້າງໂຕນັ້ນຮ້າຍຫລາຍແລະເຮັດໃຫ້ພຣະອົງຕົກຈາກຫລັງຊ້າງ ພຣະອົງໄດ້ຖືກຊ້າງຕໍ່ລົ້ມທັບແລະພຣະອົງໄດ້ສິ້ນພຣະຊົນໃນເຈັດວັນຕໍ່ມາ.


ພຣະເຈົ້າໄຊຍະເຊດຖາທິຣາດ
ກະສັດຜູ້ສ້າງວັດ ແລະຜູ້ຜາບພະມ້າ
ປະຊາຊົນລາວຣຳລຶກເຖິງພຣະເຈົ້າໄຊຍະເຊດຖາທິຣາດຢູ່ສເມີ ວ່າ ເປັນພຣະມະຫາກະສັດຜູ້ຊົງສ້າງວັດພຣະແກ້ວ ແລະ ພຣະທາດຫລວງ ທີ່ນະຄອນວຽງຈັນ
ປັດຈຸບັນເຮົາໄດ້ສ້າງອະນຸສາວະຣີຂອງພຣະອົງໄວ້ດ້ານໜ້າພຣະທາດຫລວງ ວີຣະກັມອີກຢ່າງນຶ່ງຂອງພຣະອົງທີ່ຄົນລາວຈະບໍ່ມີວັນລືມກໍຄື ພຣະອົງຊົງຜາບພະມ້າຜູ້ມາຮຸກຮານ
ສມັຍນີ້ພະມ້າເປັນມິດທີ່ດີຂອງເຮົາ ເມື່ອສມັຍພຣະເຈົ້າໄຊຍະເຊດຖາທິຣາດ ກະສັດບາຍິນຍອງແຫ່ງພະມ້າ ໄດ້ຍົກທັບມາຮຸກຮານລາວ


ກອງທັບພະມ້າມີກຳລັງພົນຫລວງຫລາຍ ພຣະເຈົ້າ
ໄຊຍະເຊດຖາທິຣາດ ຈຶ່ງຕ້ອງຖອຍທັບເຖິງສອງເທື່ອ
ເທື່ອທຳອິດຖອຍຈາກນະຄອນຫລວງພຣະບາງ
ແລະເທື່ອທີສອງຖອຍຈາກວຽງຈັນ
ໄປຢູ່ປາກງື່ມ
ແຕ່ປະຊາຊົນຕາມເມືອງແລະ
ໝູ່ບ້ານ ຍັງຄົງຈົງຮັກພັກດີຕໍ່
ພຣະເຈົ້າໄຊຍະເຊດຖາທິຣາດ
ເຂົາເຈົ້າຈຶ່ງບໍ່ອ່ອນຍອມໃຫ້ແກ່
ພະມ້າ
ຊາຍສະກັນລາວຈຶ່ງຈັດກຳລັງທັບເປັນກອງ
ຫລອນ ຄອຍດັກສະກັດໂຈມຕີພະມ້າ
ແມ່ຍິງບໍ່ຍອມສົ່ງສະບຽງອາຫານຫລືໃຫ້ການຊ່ອຍເຫລືອ
ພະມ້າຢ່າງໃດ ຍິ່ງກວ່ານັ້ນເຂົາເຈົ້າຍັງລັກສົ່ງຂ່າວ
ການເຄື່ອນໄຫວຂອງພະມ້າໄປໃຫ້ພຣະເຈົ້າໄຊຍະ
ເຊດຖາທິຣາດຊົງຊາບນຳ



ກອງທັບພະມ້າອ່ອນເພັຽ
ແລະເປືດໜ່າຍ ຍ້ອນຂາດ
ສະບຽງເຄື່ອງກິນ ອີກທັງ
ປະຊາຊົນຕາມອ້ອມແອ້ມ
ເມືອງກໍບໍ່ໃຫ້ການສນັບ
ສນູນ.

ພຣະເຈົ້າໄຊຍະເຊດຖາທິຣາດ
ຊົງຮູ້ເຖິງການເສັຽກຳລັງໃຈ
ຂອງກອງທັບພະມ້າ ພຣະອົງ
ຈຶ່ງຊົງສັ່ງໃຫ້ທະຫານເຂົ້າໂຈມ
ຕີ ຈົນທັບພະມ້າແຕກໜີ
ຈັບຊະເລີຍພະມ້າແລະຊ້າງ
ໄດ້ເປັນອັນມາກ.



ພຣະເຈົ້າໄຊຍະເຊດຖາທິຣາດ ຊົງນຳປະຊາຊົນລາວເຂົ້າຕ້ານຍັນກັບພະມ້າຈົນໄດ້ໄຊຊະນະເທື່ອນີ້ເປັນບົດຮຽນສອນໃຫ້ເຮົາຮູ້ວ່າ ເມື່ອຖືກສັດຕູຮຸກຮານ ແມ່ນວ່າຈະມີກຳລັງທັບຫລາຍປານໃດກໍຕາມ ເທົ້າຜອງໃດທີ່ປະຊາຊົນລາວຍັງມີຄວາມຈົງຮັກພັກດີຕໍ່ພຣະມະຫາກະສັດ ໃຫ້ການສນັບສນູນກອງທັບ ແລະບໍ່ຍອມຮ່ວມມືກັບຝ່າຍສັດຕູ ເທົ້າຜອງນັ້ນເຮົາຈະສາມາດທຳລາຍລ້າງມັນໄດ້ສເມີ ປັດຈຸບັນເຮົາຈຳເປັນຕ້ອງລະນຶກເຖິງບົດຮຽນສຳຄັນນີ້ແລ້ວ ຍ້ອນວ່າເຮົາພວມຖືກບຸກຮຸກຈາກສັດຕູພາຍນອກຄືພວກຮຸກຮານວຽດນາມເໜືອ.


ພຣະເຈົ້າສຸຣິຍະວົງສາ
ກະສັດຜູ້ຍິ່ງໃຫຍ່ອົງສຸດທ້າຍຂອງລາວໃນສມັຍບຸຣານ ພ.ສ. ໒໑໘໐-໒໒໓໗
ຫລັງຈາກພຣະເຈົ້າໄຊຍະເຊດຖາທິຣາດ ສະເດັດສວັຣຄົດ
ແລ້ວ ລາວກໍເສື່ອມອຳນາດລົງ ແລະແຕກແຍກກັນໄປ
ຊົ່ວໄລຍະນຶ່ງ ຈົນຮອດສມັຍຂອງພຣະເຈົ້າສຸຣິຍະວົງສາ
ຈຶ່ງໄດ້ທ້ອນໂຮມປະເທດ ແລະຟື້ນຟູກຳລັງທັບໃຫ້ເຂັ້ມ
ແຂງຄືນ
ເມື່ອກອງທັບລາວເຂັ້ມແຂງ ແລະການທ້ອນໂຮມ
ຊາດກໍສຳເຣັດລົງແລ້ວ ພຣະເຈົ້າສຸຣິຍະວົງສາກໍໄດ້
ຊຶ່ງທຳສັນຍາສັນພັນທະໄມຕີກັບປະເທດໄທແລະ
ວຽດນາມ ຊຶ່ງຕ່າງຝ່າຍກໍໂຮຮັບຕໍ່ສັນຍາທີ່ເຮັດ
ກັນໄວ້
ໃນສັນຍາລະຫວ່າງລາວແລະວຽດ
ນາມນັ້ນ ໄດ້ມີຂໍ້ຕົກລົງວ່າ ເຮືອນ
ແບບໃຕ້ກ້ອງລ່າງສູງ ແລະມີຣະບຽງຈະ
ຕ້ອງຢູ່ໃນເຂດເມືອງລາວ ແລະ
ເຮືອນທີ່ປຸກຕິດດິນ ຈະຕ້ອງຢູ່ໃນ
ເຂດວຽດນາມ

ຊາວວຽດນາມຍອມຮັບສັນຍານີ້ຍ້ອນພຣະເຈົ້າ
ສຸຣິຍະວົງສາ ຈຶ່ງຕັ້ງກອງທະຫານຮັກສາທາງຜ່ານ
ຕາມຮ່ອມພູ ເພື່ອປ້ອງກັນການບຸກຮຸກດິນ
ແດນລາວ



ໃນສມັຍພຣະເຈົ້າສຸຣິຍະວົງສາ ໄດ້ມີຊາວຢູໂຣບສາມຄົນ
ເດີນທາງມາຢ້ຽມຢາມປະເທດລາວ ຄົນນຶ່ງເປັນພໍ່ຄ້າ
ຊາວຮໍແລນ ຊື່ ເກີຣິດ ຟອນ ວູສຕົບ ອີກສອງຄົນເປັນນັກ
ບວດຄາທໍລິກ ຊາດອິຕາລີ ຊື່ ອີເທີ ເລີຣີຍາ ແລະຊາວ
ປໍຕຸເກດ ຊື່ ເດີມາຣີນີ ທັງສາມທ່ານນີ້ ນັບເປັນຊາວ
ຢຸໂຣບພວກທຳອິດທີ່ໄດ້ມາຢ້ຽມຢາມລາວ



ວູສຕົບ ເລີຣີຍາ ແລະເດີມາຣີນີ ຮູ້ສຶກຈັບໃຈໃນຄວາມ
ສົມບູນ ແລະຄວາມຮຸ່ງເຮືອງທີ່ເຂົາເຈົ້າໄດ້ເຫັນ
ຫລາຍ ຈາກປຶ້ມທີ່ເຂົາເຈົ້າຂຽນໄວ້ເປັນຂໍ້ພິສູດ
ໄດ້ວ່າ ພຣະຣາຊອານາຈັກລາວເຄີຍເປັນຊາດ
ທີ່ນ່າພາກພູມໃຈ ແລະມີອາຣະຍະທັມສູງມາ
ແລ້ວເປັນເວລາດົນນານ ກ່ອນສມັຍຕົກເປັນ
ອານານິຄົມ






ເມື່ອສົມເດັດພຣະເຈົ້າສຸຣິຍະວົງສາທັມມິກະຣາດ
ສະເດັດສູຣະຄົດແລ້ວ ຕໍ່ມາຮອດປີ ຄ.ສ. ໑໗໑໓ ປະເທດ
ລາວທີ່ກວ້າງໃຫຍ່ໄພສານ ກໍໄດ້ແບ່ງແຍກກັນອອກເປັນ
໓ ອານາຈັກ ຄື : ອານາຈັກລ້ານຊ້າງຫລວງພຣະບາງ ໑.
ອານາຈັກລ້ານຊ້າງວຽງຈັນ ໑. ອານາຈັກນະຄອນຈຳປາສັກ ໑.


ພຣະເຈົ້າອະນຸ ໑໘໐໔-໑໘໒໘
ນັກຮົບເພື່ອກອບກູ້ອິສຣະພາບ
ແລະຄວາມເປັນອັນໜຶ່ງອັນດຽວກັນ
ຂອງອານາຈັກ
ພາຍຫລັງຫລັງທີ່ປະເທດລາວໄດ້ແຍກອອກເປັນສາມອານາຈັກແລ້ວ ກະສັດແຕ່ລະອານາຈັກບໍ່ມີຄວາມເຂັ້ມແຂງ ແລະສາມາດພໍໃນການທີ່ຈະປົກປັກຮັກສາເອກຣາດຂອງຕົນ ໃນປີ ໑໗໗໘ ທັງສາມອານາຈັກລາວໄດ້ຕົກໄປຢູ່ໃຕ້ອຳນາດຂອງໄທ ແລະອານາຈັກພາກກາງຂອງລາວບາງສ່ວນໄດ້ຖືກເກາຄອບຄຸມ.
ພຣະເຈົ້າອະນຸ ກະສັດແຫ່ງອານາຈັກວຽງຈັນ ໄດ້ອ່ານເຣື່ອງຄວາມເຣືອງຊື່ລືນາມຂອງພົງສາວະດານລາວ ເມື່ອສມັຍປະເທດລາວເປັນອັນໜຶ່ງອັນດຽວກັນແລະປາສຈາກການຄອບຄອງຂອງຕ່າງປຣະເທດ.
ສີຍາມ
ພຣະເຈົ້າອະນຸບໍ່ພໍພຣະໄທໃນການຄອບຄຸມຂອງຕ່າງປະເທດ ພຣະອົງນຶກຢູ່ສເມີວ່າມັນຈະຕ້ອງເປັນຊັ່ນນີ້ຕລອດໄປຖ້າຫາກບໍ່ໂຮມປະເທດເປັນອັນໜຶ່ງອັນດຽວກັນ.
ພຣະອົງໄດ້ຕັດສິນໃຈທີ່ຈະເຕົ້າໂຮມລາວ ແລະຕໍ່ສູ້ເພື່ອເອກຣາດ ພຣະອົງໄດ້ເຣີ່ມຈັດຂະບວນໄພ່ພົນເພື່ອຕໍ່ສູ້ກັບໄທ.



ພຣະເຈົ້າອະນຸນຶກຢູ່ສເມີວ່າ ພຣະອົງຈະບໍ່ສາມາດກູ້ອິສຣະພາບປະເທດລາວອອກຈາກອຳນາດຂອງໄທ ຫາກພຣະອົງບໍ່ໂຮມເອົາສາມອານາຈັກເຂົ້າເປັນອັນດຽວກັນກ່ອນ ສະນັ້ນພຣະອົງຈຶ່ງຕຣັດສັ່ງໃຫ້ຣາຊໂອຣົສຂອງພຣະອົງ ຜູ້ຄອງນະຄອນຈຳປາສັກ ຈັດຂະບວນເຜົ່າລາວເທິງ (ຂ້າ) ເພື່ອຕໍ່ຕ້ານໄທ ພຣະອົງກໍໄດ້ສົ່ງພຣະຣາຊສານໄປຖວາຍເຈົ້າມັນທາຕຸຣາດ ກະສັດຫລວງພຣະບາງເຊັ່ນດຽວກັນ ເພື່ອຈັກຈູງກ້ຽວກ່ອມໃຫ້ຮ່ວມມືກັນທຳການກູ້ຊາດ.

ໃນປີ ໑໘໒໗ ພຣະເຈົ້າອະນຸໄດ້ຍິນຂ່າວເປົ່າປິວວ່າ ປະເທດອັງກິດຈະໂຈມຕີບາງກອກ ພຣະອົງເຫັນວ່າໂອກາດອຳນວຍພໍດີໃນການກູ້ອິສຣະພາບ ພຣະອົງນຳກອງທັບມຸ່ງໜ້າສູ່ບາງກອກ ສ່ວນຣາຊໂອຣົດຂອງພຣະອົງນຳພວກຕໍ່ຕ້ານຂ້າພາກໃຕ້ໂຈມຕີໄທ.





ແຕ່ບັງເອີນເປັນຄາວເຄາະ ເຈົ້າມັນທາຕຸຣາດແຫ່ງຫລວງພຣະບາງບໍ່ສາມາດທີ່ຈະສົ່ງກຳລັງໄປຊ່ອຍເຈົ້າອະນຸໄດ້ ເນື່ອງຈາກພຣະອົງກຳລັງປ້ອງກັນຊາຍແດນຂອງພຣະອົງທາງພາກເໜືອ ຊຶ່ງຕິດຕໍ່ກັບພະມ້າ ແລະກຳລັງຖືກພະມ້າຄຸກຄາມຢູ່.

ບໍ່ພໍເທົ່າໃດ ທະຫານໄທກໍຍຶດຄອງນະຄອນວຽງຈັນ ແລະນະຄອນຈຳປາສັກ ໃນນະຄອນວຽງຈັນ ພວກໄທໄດ້ທຳລາຍມ້າງເພເປັນການໃຫຍ່ແລະກໍໄດ້ນຳເອົາພຣະແກ້ວທີ່ສັກສິດຂອງລາວໄປພ້ອມ ສ່ວນພຣະເຈົ້າອະນຸໄດ້ໜີໄປປະເທດແກວພ້ອມທັງທະຫານຂອງພຣະອົງ.





ເຈົ້າຣາຊວົງ (ເຫງົ້າ) ໂອຣົດເຈົ້າອະນຸ ແມ່ທັບໜ້າຂອງລາວຣົບກັບພຍາບໍດິນ ແມ່ທັບໄທ ພຍາບໍດິນເສັຽທ່າມ້າລົ້ມເຕັງ ເຈົ້າຣາຊວົງແທງດ້ວຍຫອກ ສົ້ນຖືກກົກຂາປັກຄາດິນກຳລັງຈະຟັນດ້ວຍດາບ ແຕ່ນ້ອງຊາຍພຍາບໍດິນເລັ່ນມາຊ່ອຍເລີຍຖືກເຈົ້າຣາຊວົງຟັນຂາດເຄິ່ງ ພຍາບໍດິນໄດ້ໂອກາດດີ້ນຫລຸດ ແລະເຈົ້າຣາຊວົງກໍຖືກຍິງຕົກຈາກຫລັງມ້າ ທະຫານທັງສອງຝ່າຍຕ່າງກໍເອົານາຍຂອງຕົນໜີ.



ພຣະເຈົ້າອະນຸຮູ້ວ່າພວກແກວແລະໄທໄດ້
ຮົບຣາຂ້າຟັນກັນຢູ່ເລື້ອຍໆ ພຣະອົງໄດ້
ຄິດວ່າຄວາມເປັນກາງ ເອກຣາດຂອງ
ປະເທດລາວຣະຫວ່າງໄທແລະແກວນັ້ນ
ອາດນຳຄວາມສັນຕິໄດ້ ສະນັ້ນພຣະ
ອົງຈຶ່ງກັບຈາກປະເທດແກວເພື່ອ
ເຈຣະຈາສັນຕິກັບໄທ.

ແຕ່ກໍບໍ່ໄດ້ຮັບຜົນແຕ່ຢ່າງໃດເພາະວ່າ
ໄທບໍ່ຍອມຮັບຄວາມປະນີປະນອມຂອງ
ເຈົ້າອະນຸ ພຣະອົງເຫັນທ່າບໍ່ດີ ຈຶ່ງຮວບ
ຮວມກຳລັງຂັ້ນສຸດທ້າຍ ເພື່ອກຳຈັດພວກ
ໄທແຕ່ພຣະອົງມີທະຫານນ້ອຍກວ່າຫລາຍສິບ
ເທົ່າ ຈຶ່ງປຣາຊັຍ ໃນທີ່ສຸດກໍໄດ້ເອົາຕົວຫລົບ
ໜີໄປທາງຊຽງຂວາງ





ພວກທະຫານໄທໃນທີ່ສຸດກໍຈຸດເລົາເຜົາຜານ
ນະຄອນວຽງຈັນທັງໝົດ ແລະບັງຄັບໃຫ້ຄອບຄົວ
ປະຊາຣາສດອນລາວນັບພັນໆ ຍ້າຍໄປຢູ່ພາກ
ຕະວັນອອກເໜືອຂອງໄທ.

ພຣະເຈົ້າອະນຸໄດ້ຖືກຈັບທີ່ເມືອງພວນ ແຂວງຊຽງ
ຂວາງ ໃນປີ ໑໘໒໘ ແລະຖືກສົ່ງໄປບາງກອກ
ແລະແມ່ນບ່ອນທີ່ພຣະອົງໄດ້ຈົບຊີວິດລົງຍ້ອນ
ເສັ້ງພຣະໄທ ຄວາມຫວັງທີ່ພຣະອົງຈະນຳເອົາ
ຄວາມປອງດອງຊາດ ແລະເສຣີພາບມາສູ່
ພຣະຣາຊອານາຈັກລາວຈຳຕ້ອງລໍຖ້າຕໍ່ໄປ
ອີກ ໑໐໐ ກວ່າປີ ກ່ອນຈະກາຍມາ
ເປັນຄວາມຈິງ.




ຕໍ່ມາ ຝຣັ່ງເສດໄດ້ເຂົ້າມາປົກຄອງລາວ ເປັນເວລາ
ຫ້າສິບປີປາຍ
ແຕ່ຕລອດຣະຍະເວລາທີ່ຖືກແບ່ງແຍກ ແລະປົກຄອງໂດຍ
ຕ່າງຊາດນີ້ ຊາວລາວທຸກຄົນກໍຍັງຈື່ການທ້ອນໂຮມແລະ
ຄວາມເປັນເອກຣາດຂອງບັນພະບຸຣຸດພາຍໃຕ້ການນໍາຂອງ
ກະສັດທີ່ຍິ່ງໃຫຍ່ໃນສມັຍບູຮານໄດ້ດີ
ຄວາມຮູ້ສຶກໃນຂໍ້ທີ່ວ່າ ເຮົາເຄີຍຍິ່ງໃຫຍ່
ມາແລ້ວໃນປວັດສາດ ເປັນເຮງດົນໃຈ
ໃຫ້ເຮົາເກີດຄວາມສາມັກຄີໂຮມກັນຕໍ່ສູ້
ຈົນໄດ້ເອກຣາດອີກເທື່ອນຶ່ງ ແລະປັດຈຸບັນ
ເປັນພະລັງຊຸກຍູ້ໃຫ້ເຮົາຟ້າວສ້າງສາແລະ
ປ້ອງກັນປະເທດ



ກະຊວງຖແລງຂ່າວໂຄສນາການ ແລະ ທ່ອງທ່ຽວ

ພິມຄັ້ງແຣກ ໑໐໐.໐໐໐ ສະບັບ